ວິທີການປູກອ້ອຍ

ອ້ອຍ ເປັນພືດເສດຖະກິດທີ່ສຳຄັນ ສາມາດປູກໄດ້ເກືອບທຸກພາກຂອງປະເທດ ມີອາຍຸເກັບກ່ຽວ 10-12 ເດືອນ ເກັບຜົນຜະລິດໄດ້ 2-3 ປີ, ສະພາບແວດລ້ອມ ແລະ ການບຳລຸງຮັກສາ ເປັນປັດໄຈສຳຄັນໃນການເພີ່ມຜົນຜະລິດ ແລະ ຄຸນນະພາບຂອງອ້ອຍ. ອ້ອຍສາມາດປູກໄດ້ໃນດິນເກືອບທຸກປະເພດຕັ້ງແຕ່ດິນລ້ວນເຖິງດິດລ້ວນປົນຊາຍ . ພື້ນທີ່ປູກຄວນເປັນພື້ນທີ່ຮາບພຽງ , ຄວນຫຼີກລ້ຽງການປູກອ້ອຍໃນດິນໜຽວ ໂພດ, ຊາຍລ້ວນ ແລະ ດິນຮົກເຮື້ອ ເກີນໄປ.

ການກະກຽມແນວພັນ

ແນວພັນອ້ອຍ ຄວນມາຈາກໜານປູກທີ່ຈະເລີນເຕີບໂຕດີຕົ້ງຕາມພັນ, ປັດສະຈາກເຊື້ອโรค ແລະ ແມງໄມ້, ມີອາຍຸ ປະມານ 8-10 ເດືອນ. ຖ້າຕ້ອງໃຊ້ແນວພັນອ້ອຍທີ່ຕັດໄວ້ແລ້ວໃນສວນຄວນຄຸມທ່ອນພັນດ້ວຍໃບອ້ອຍ ເພື່ອປ້ອງ ກັນຕາອ້ອຍແຫ້ງ, ສຳລັບແນວພັນຄວນແຊ່ທ່ອນພັນໃນນ້ຳຮ້ອນປະມານ 2 ຊົ່ວໂມງ ເພື່ອປ້ອງກັນເຊື້ອโรคใบขาว , ຈາກນັ້ນແຊ່ທ່ອນພັນໃນສານເຄມີໂພນີໂຄນາໄຊ ອັດຕາ 66 ຊີຊີ/ນ້ຳ 20 ລິດ ປະມານ 30 ນາທີ ເພື່ອປ້ອງກັນ ເຊື້ອโรคแส้ดำ, ຫ່ຽວເນົ່າແດງ ແລະ ມີກົ່ນສົ້ມ.

ລະດູການປູກ

ການປູກອ້ອຍໃນປະຈຸບັນສາມາດແບ່ງຕາມລະດູການໄດ້ ເປັນ 2 ປະເພດ ຄື:

ການປູກອ້ອຍຕົ້ນລະດູຝົນ: ແບ່ງອອກເປັນ 2 ເຂດ ຄື:

1. **ໃນເຂດຊົນລະປະທານ** ສ່ວນໃຫຍ່ຈະປູກໃນຊ່ວງ ເດືອນກຸມພາ ຫາ ເດືອນເມສາ.
2. **ໃນເຂດອາໄສນ້ຳຝົນ** ສ່ວນໃຫຍ່ຈະປູກໃນຊ່ວງ ເດືອນເມສາ ຫາ ເດືອນມິຖຸນາ.

ການປູກອ້ອຍປາຍລະດູຝົນ:ແມ່ນສາມາດເຮັດໄດ້ສະເພາະບາງພື້ນທີ່ ທີ່ມີປະລິມານການກະຈາຍຂອງນ້ຳຝົນດີ ແລະ ດິນເປັນດິນຊາຍຫຼາຍກວ່າດິນລ້ວນປົນຊາຍ.ການປູກອ້ອຍປະເພດນີ້ຈະປູກປະມານກາງເດືອນຕຸລາຫາເດືອນທັນວາ.

ການກຽມດິນ

ໄຖດິນໃຫ້ເລິກໃນເວລາທີ່ມີຄວາມຊຸ່ມພໍດີ ແລະ ຄວນໄຖດິນທຸກຄັ້ງທີ່ມີການຮື້ຕໍ່ເພື່ອປູກອ້ອຍຄືນໃໝ່ໂດຍໄຖເປັນ ຮູບຕາໜາກລຸກ.

- ຖ້າປູກອ້ອຍຕົ້ນລະດູຝົນ ຫຼື ປູກອ້ອຍໂດຍອາໃສນ້ຳຊົນລະປະທານບໍ່ຈຳເປັນຕ້ອງໄຖພວນໃຫ້ດິນແຕກ.
- ຖ້າປູກອ້ອຍປາຍຝົນ ຫຼື ປູກອ້ອຍຂ້າມແລ້ງຕ້ອງໄຖພວນຈົ່ນດິນແຕກລະອຽດເພື່ອຊ່ວຍຫຼຸດຄວາມສູນເສຍ ຄວາມຊຸ່ມພາຍໃນດິນໃຫ້ຊ້າລົງ.

ວິທີການປູກ

• ຖ້າໃຊ້ຄົນປູກຈະຍົກຮ່ອງກວ້າງ 1.4-1.5 ມ (ປົກກະຕິ 1.3 ມ) ວາງພັນອ້ອຍເປັນລຳ ໂດຍໃຊ້ລຳດຽວໄຄວ່ກັນ ເຄິ່ງລຳ ຫຼື 2 ລຳຄູ່ ຕາມລັກສະນະການແຕກກໍຂອງພັນອ້ອຍທີ່ໃຊ້.

• ຖ້າໃຊ້ເຄື່ອງປູກຫຼັງຈາກກຽມດິນແລ້ວບໍ່ຕ້ອງຍົກຮ່ອງຈະໃຊ້ເຄື່ອງປູກຕິດທ້າຍລົດໄຖໂດຍຈະມີເຄື່ອງເປີດຮ່ອງ ແລະ ຊ່ອງສຳລັບໃສ່ພັນອ້ອຍເປັນລຳ , ມີເຄື່ອງຕັດລຳອ້ອຍເປັນທ່ອນລົງໃນຮ່ອງ , ມີເຄື່ອງປົກດິນຕາມຫຼັງ ແລະ ສາມາດດັດແປງໃຫ້ສາມາດໃສ່ປຸຍຮອງພື້ນພ້ອມກັບການປູກໄດ້ເລີຍ, ປະຈຸບັນມີການນຳໃຊ້ເຄື່ອງປູກທັງແບບແຖວດຽວ ແລະ ແບບຄູ່, ໂດຍມີໄລ ຍະຫ່າງຄູ່ແຖວ 20-30 ຊຕມ, ໃນກໍລະນີໃຊ້ພັນອ້ອຍທີ່ແຕກກໍນ້ອຍ.

ການໃສ່ປຸຍ

ຄວນແບ່ງການໃສ່ປຸຍເປັນ 2 ຄັ້ງ ຄື: ຄັ້ງທີ 1: ໃສ່ປຸຍຮອງພື້ນກ່ອນປູກ ຫຼື ພ້ອມປູກ,ໄຖພວນດິນເຮັດເປັນຮ່ອງ ແລ້ວປູກປະມານ 60-80 ກລ/ໄລ່, ຄັ້ງທີ 2: ໃສ່ປຸຍແຕ່ງ ໜ້າອ້ອຍອາຍຸບໍ່ເກີນ 3-4 ເດືອນ ປະມານ 60-80 ກລ/ໄລ່.

ການປ້ອງກັນ ແລະ ກຳຈັດວັດສະພືດ

• ໃຊ້ແຮງງານຄົນເສຍຫຍ້າໃນຊ່ວງຕັ້ງແຕ່ປູກຈົນເຖິງອາຍຸ 4 ເດືອນ.

• ໃຊ້ເຄື່ອງໄຖພວນດິນລະຫວ່າງຮ່ອງຫຼັງປູກ ເມື່ອ ວັດສະພືດເລີ່ມປົ່ງຂຶ້ນມາໃໝ່.

• ໃຊ້ສານເຄມີຊີດພົ່ນເພື່ອຄຸມຫຍ້າ.

ການເກັບກ່ຽວ

ຖ້າຂາດແຄນແຮງງານໃຫ້ເຜົາໃບອ້ອຍກ່ອນການເກັບກ່ຽວຈະເຮັດໃຫ້ຕັດອ້ອຍໄດ້ໄວແຕ່ຖ້າມີແຮງງານພຽງພໍແມ່ນບໍ່ຈຳເປັນຕ້ອງເຜົາໃບອ້ອຍ,ບໍ່ຕ້ອງລອກກາບໃບ .ອ້ອຍທີ່ເຜົາໃບຖ້າບໍ່ຕັດສົ່ງໂຮງງານທັນທີຈະເຮັດໃຫ້ເສຍທາດນ້ຳຕານ ແລະ ຄຸນນະພາບຂອງຄວາມຫວານ.

ການຕັດອ້ອຍ ໂດຍທີ່ບໍ່ໄດ້ຈູດໃບກ່ອນ